# ການຜະລິດເຂົ້ານາແຊງຢູ່ພື້ນທີ່ລະດັບໜ້າດິນສູງ

Rice Science for a Better World
INTERNATIONAL RICE RESEARCH INSTITUTE

ແຜ່ນໂຄສະນາເຕັກໂນໂລຢີສໍາລັບຊາວກະສິກອນ

IRRI

ອຸນຫະພູມໜາວໃນຊ່ວງເດືອນທັນວາ ຫາ ເດືອນມັງກອນແມ່ນເປັນບັນຫາໜຶ່ງໃນການຕົກກ້ານາແຊງຢູ່ ສປປ ລາວໂດຍສະເພາະພື້ນທີ່ທີ່ມີລະດັບສູງຈາກໜ້ານໍ້າທະເລ 600 ມ ຂຶ້ນໄປ. ອຸນຫະພູມໜາວເປັນສາຍເຫດເຮັດໃຫ້ກ້າບໍ່ແຕກງອກດີ ແລະ ເຮັດໃຫ້ກ້າບໍ່ຂຶ້ນ ແລະ ຍັງເຮັດໃຫ້ອາຍຸຂອງເຂົ້າແກ່ຍາວອີກດ້ວຍ. ພື້ນທີ່ສູງເທົ່າໃດ, ບັນຫາເຫຼົ່ານີ້ແມ່ນກໍ່ເພີ່ມຂຶ້ນເທົ່ານັ້ນ. ວິທີທີ່ສາມາດແກ້ໄຂບັນຫາດັ່ງກ່າວຕ້ອງນໍາໃຊ້ແນວພັນທີ່ເໝາະສົມ ແລະ ນໍາໃຊ້ຜ້າຢາງປົກຄຸມຕາກ້າເວລາຕົກກ້າ.

**ແນວພັນ**

ໃນການຜະລິດເຂົ້ານາແຊງຢູ່ເຂດທີ່ມີລະດັບໜ້າດິນສູງແມ່ນແນະນໍາໃຫ້ໃຊ້ແນວພັນເຂົ້າດໍເຊັ່ນ: ທ່າດອກຄໍາ 5.

**ການໃຊ້ຜ້າຢາງປົກ**

ການໃຊ້ຜ້າຢາງປົກຄຸມຕາກ້າເຮັດໃຫ້ອຸນຫະພູມອາກາດ ແລະ ນໍ້າເພີ້ມຂຶ້ນ, ເຮັດໃຫ້ກ້າແຕກງອກ ແລະ ຈະເລີນເຕີບໂຕໄດ້ດີກ່ວາຕົກກ້າທໍາມະດາ. ແລະ ຍັງເຮັດໃຫ້ອາຍຸຂອງການເກັບກ່ຽວສັ້ນລົງອີກດ້ວຍ. ນອກນັ້ນຊາວກະສິກອນຍັງໃຫ້ຂໍ້ສັງເກດວ່າຜ້າຢາງສາມາດປ້ອງກັນໜູໄດ້ອີກ. ວິທີການຕົກກ້າແບບໃຊ້ຜ້າຢາງປົກເຮັດໃຫ້ຊາວກະສິກອນຮູ້ຈັກເວລາອັນເໝາະສົມທີ່ຈະຕົກກ້າໄດ້. ພວກເຂົາເຈົ້າສາມາດຕົກກ້າໃນຊ່ວງເດືອນທັນວາເຊິ່ງເປັນເດືອນທີ່ມີອຸນຫະພູມໜາວສຸດ.




ເພື່ອໃຫ້ໄດ້ຮັບຜົນດີ, ພາຍຫຼັງຫວ່ານກ້າ ແລະ ກ່ອນກ້າແຕກງອກໝົດຄວນໃຊ້ຜ້າຢາງປົກຄຸມໂລດ (ເບິ່ງຮູບສະແດງ). ໃຫ້ໃຊ້ຜ້າຢາງທີ່ທົນທານຕໍ່ກັບລົມພັດ, ໃນຊ່ວງກາງຄືນຄວນດຶງຜ້າຢາງລົງແຕ່ລະດ້ານຕິດກັບພື້ນດິນໄວ້, ໃນຊ່ວງກາງວັນຖ້າອາກາດຮ້ອນຫຼາຍກໍ່ໃຫ້ເປີດສົ້ນໃດສົ້ນໜຶ່ງຂອງຜ້າຢາງຂຶ້ນເພື່ອເຮັດໃຫ້ອາກາດລ່ວງ. ເມື່ອກ້າສູງພໍທີ່ຈະປັກດໍາໄດ້ແລ້ວໃຫ້ຮື້ຜ້າຢາງອອກໂດຍຮື້ອອກກ່ອນການປັກດໍາຢ່າງໜ້ອຍ 1 ອາທິດເພື່ອເຮັດໃຫ້ຕົ້ນກ້າແຂງ ແລະ ແຂງແຮງເພື່ອນໍາໄປປັກດໍາ.




ຂຽນ ແລະ ຂໍ້ມູນປະກອບໂດຍ: B Linquist, S Fukai ແລະ J. Basnayake
ແປໂດຍ: ຖານີ ແກ້ວວົງວິຈິດ

ສໍາລັບຂໍ້ມູນເພີ້ມເຕີມ: ເບິ່ງໃນເວັບ www.knowledgebank.irri.org

ACIAR
ໂຄງການ ລາວ-ອີຣີ LAO-IRRI PROJECT
NAFRI
ສູນຄົ້ນຄ້ວາກະສິກໍາ
ສູນຄົ້ນຄ້ວາກະສິກໍາ ແລະ ປ່າໄມ້ພາກເໜືອ